**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ເລກທີ 903 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 03 ພະຈິກ 2025

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຂໍເຊີນບັນດາ ບໍລິສັດ, ຫ້າງ/ຮ້ານ ທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ ໂຄງການສະໜອງວັດຖຸອຸປະກອນ ແລະ ຕິດຕັ້ງໂປຣແກຣມຄຸ້ມຄອງຂໍ້ມູນສະມາຊິກພັກ ໃຫ້ຄະນະຈັດຕັ້ງແຂວງໃນຂອບເຂດທົ່ວປະເທດ ກຳນົດເວລາໃນການຈັດຕັ້ງປະຕິບັດ 30 ວັນ (1 ເດືອນ)
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477 /ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ໃນ ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ມີເລກປະຈຳຕົວຜູ້ເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະອາກອນ ຖືກຕ້ອງຕາມກົດໝາຍກຳນົດ.
4. ບໍລິສັດ, ຫ້າງ/ຮ້ານ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອກະສານປະມູນຄົບຊຸດໄດ້ທີ່ ພະແນກຄຸ້ມຄອງ-ບໍລິຫານ ຫ້ອງການ ຄະນະຈັດຕັ້ງສູນກາງພັກ (ເບີໂທລະສັບ 020 22943483) ບ້ານສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:30 ແລະ 13:30-16:00 ໂມງ, **ນັບແຕ່ວັນທີ 10 ຫາ 28 ພະຈິກ 2025**, ລາຄາຊອງປະມູນຊອງລະ 1,000,000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ສົ່ງຄືນ ແລະ ການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
5. ກຳນົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ພະແນກຄຸ້ມຄອງ-ບໍລິຫານ ຫ້ອງການ ຄະນະຈັດຕັ້ງສູນກາງພັກ ກ່ອນເວລາ 16:00 ໂມງຂອງວັນທີ 28 ພະຈິກ 2025, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. **ກຳນົດການເປີດຊອງປະມູນແມ່ນເວລາ 9:00 ໂມງ ຂອງວັນທີ 01 ທັນວາ 2025 ທີ່ຫ້ອງປະຊຸມ ຊັ້ນ 3 ຕຶກຄະນະຈັດຕັ້ງສູນກາງພັກ (ຫຼັກ 6)**. ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ.
6. ເອກະສານປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າ ບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າປະມູນ ເປັນແຊັກ ຫຼື ເງິນສົດ ເທົ່ານັ້ນ.

**ຫົວໜ້າຫ້ອງການ**

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ວັນນະ ບຸບຜາ